


พົວພັນຂໍ້ມູນເພີ້ມເຕີມໄດ້ທີ່:

ເຮືອນເລກທີ 525, ໜ່ວຍ 41, ຊັ້ນ 4 ອາຄານສີຂຽວ ບ້ານນາໄຊ, ເມືອງໄຊເສດຖາ, ນະຄອນຫຼວງວຽງຈັນ, ສປປ ລາວ, ຕູ້ ປ.ນ. 9997,
www.winrock.org



ສະໜັບສະໜູນກິດຈະກຳໂດຍ:

Activity supported by:

ໂຄງການ ສ້າງຄວາມເຊື່ອມໂຍງເພື່ອຂະຫຍາຍເຄືອຂ່າຍກະສິກຳ

Creating Linkages for Expanded Agricultural Networks (CLEAN Project)


# ມອດເຈາະໝາກກາເຟ

## Coffee Berry Borer

ສູນປ້ອງກັນພືດ, ກົມປູກຝັງ, ກະຊວງກະສິກຳ ແລະ ປ່າໄມ້

# ລັກສະນະການທຳລາຍ

ມອດຈະເຂົ້າທຳລາຍ ໝາກກາເຟ ຕັ້ງແຕ່ໝາກກາເຟຍັງນ້ອຍ ຈົນເຖິງໝາກສຸກແກ່, ມອດຈະເຈາະກົ້ນຂອງໝາກກາເຟ ເປັນຮູກົມເຫັນຊັດເຈນ ແລະ ທຳລາຍຢູ່ທາງໃນໝາກ, ໝາກກາເຟທີ່ຖືກມອດເຈາະຈະເປັນທາງໃຫ້ເຊື້ອລາ, ເຊື້ອແບັກທີເລຍ ເຂົ້າທຳລາຍຊ້ຳເຮັດໃຫ້ໝາກຫຼົ່ນ, ຜົນຜະລິດເສຍຫາຍ ແລະ ຄຸນນະພາບຂອງໝາກກາເຟຫຼຸດລົງ.





# ການລະບາດ

ມອດຈະເຈາະໝາກກາເຟ ໄລຍະເປັນໝາກອ່ອນຄືຊ່ວງເດືອນ 8 ຫາເດືອນ 12 ເປັນຊ່ວງເວລາໝາກກາເຟ ອ່ອນຈົນຮອດໝາກກາເຟສຸກ.



# ການປ້ອງກັນ ແລະ ກຳຈັດ

1. ສຳຫຼວດຕິດຕາມພື້ນທີ່ປູກກາເຟ ເປັນປະຈຳ.
2. ອານາໄມພື້ນທີ່ປູກໂດຍການກຳຈັດວັດສະພືດ, ເກັບໝາກທີ່ສຸກ ຫຼື ແຫ້ງ ຢູ່ເທິງຕົ້ນ ແລະ ໜ້າດິນ ທີ່ມອດທຳລາຍນຳໄປຝັງດິນ ຫຼື ໄປເຜົາໄຟທຳລາຍນອກພື້ນທີ່ການຜະລິດ ເພື່ອຫຼຸດຜ່ອນການລະບາດ.
3. ຕັດແຕ່ງກິ່ງງ່າ ແລະ ຊົງພຸ່ມ ເພື່ອໃຫ້ກາເຟໄດ້ຮັບແສງພຽງພໍ ແລະ ສາມາດລະບາຍອາກາດໄດ້ດີ.
4. ຫຼີກລ້ຽງການຕາກໝາກກາເຟສຸກ ບໍລິເວນພື້ນທີ່ການຜະລິດ ແລະ ພື້ນທີ່ໃກ້ຄຽງ.
5. ວາງກັບດັກ ຟີລາໂມນ ເມທິລແອກໍຮໍ (Methyl Alcohol): ເອທິລແອກໍຮໍ (Ethyl Alcohol) ອັດຕາ1:1) 5-10 ຈຸດ/ໄລ່ ແລະ ຕື່ມ ເຟລາໂມນ ທຸກໆ 14 ວັນ.
6. ໃຊ້ກ້ານ ຫຼື ໃບຢາສູບແຫ້ງໂຮຍບາງໆ ອ້ອມຮອບຕົ້ນ ໃນອັດຕາ 1 ກິໂລກຼາມ/ຕົ້ນເພື່ອຂັບໄລ່ໂຕແກ່ຂອງມອດ.
7. ນຳໃຊ້ເຊື້ອ ບູເບີເລຍ ບ່າເຊຍນ່າ (Beauveria bassiana) ອັດຕາ 1 ກິໂລກຼາມ /ນ້ຳ 20 ລິດ (ສີດໄລຍະກາເຟເປັນໝາກອ່ອນ ເດືອນ ມີນາ-ກັນຍາ ເປັນຊ່ວງໄລຍະມອດ ເຈາະບໍ່ເລີກ) ສີດ 2 ອາທິດ/1 ຄັ້ງ.
8. ໃຊ້ຢາເຄມີຂ້າແມງໄມ້ ເຊັ່ນ: ຄາໂບຊັນແຟນ (Carbosulfan) 50% EC ອັດຕາສ່ວນ 80-95ຊີຊີ/ນ້ຳ 20 ລິດ (ສີດຊ່ວງໄລຍະກາເຟເປັນໝາກອ່ອນ ເດືອນ ມີນາ- ກັນຍາຊຶ່ງເປັນໄລຍະມອດເຈາະບໍ່ເລີກ) ສີດ 2 ອາທິດ/1 ຄັ້ງ.